ຕັດດ້ານເທິງຂອງແກັດອອກ, ແລ້ວທາສີຟ້າ, ຕິດເຈ້ຍສີ ແລະສີຂຽວໃສດ້ານຫຼັງ ແລະ ດ້ານຂ້າງຂອງແກັດໃຫ້ກາຍເປັນພື້ນຂອງປ່າ ໄດໂອລາມາ



ໃຫ້ຈັດສາກທີ່ເຮົາວາງແຜນຈະສ້າງປ່າໃສ່ເທິງກອງເຈັ້ຍ ດ້ວຍກະດາດແຂງແຜນໃຫຍ່ ໂດຍຈິດຕະນາການ ເຊັ່ນຕົວຢ່າງ:
ຄິດວ່າບັນດາສັດເຫຼົ່ານັ້ນແມ່ນສ່ວນໜຶ່ງຂອງຕອງໂສອາຫານຂອງເສືອ ທີພວກມັນກຳລັງຊ້ອນໂຕຢູ່ບ່ອນໃດບ່ອນ ໜຶ່ງໃນປ່າໄດໂອລາມາ ?



ສ້າງສາກພື້ນຫຼັງສໍາລັບພື້ນຫຼັງຂອງປ່າໄດໂອລາມາ



ແລ້ວຕັດເຈ້ຍມາເຮັດເປັນຕົ້ນໄມ້, ໃບໄມ້ ແລະ ກິ່ງກ້ານຂອງຕົ້ນໄມ້





ສ່ວນບັນດາຕຳແໜ່ງຕ່າງໆ ຂອງໃບໄມ້ທີ່ເຈົ້າຈະຕິດນັ້ນແມ່ນເອົາຕິດພາຍຫຼັງ.... ແຕ່ໃຫ້ເລີ່ມຕົ້ນຈາກ
ການເຮັດໃຫ້ສາກຂອງເຈົ້າໃຫ້ມັນລະອຽດກ່ອນ



ຕົດຫຼືທາສີເຈ້ຍສີພື້ນຫຼັງໃຫ້ເປັນສີຂຽວ, ສວນສີຟ້າແມ່ນເຮັດເປັນໜອງນ້ຳຢູ່ໃນກາງປ່າໄດໂອລາມາ

ຈາກນັ້ນເລີ່ມຕົ້ນຕັດກົກໄມ້, ໃບຫຍ້າທີ່ເປັນສ່ວນໜຶ່ງຂອງພື້ນປ່າ





ຫຼັງຈາກນັ້ນ, ກໍ່ແຕ້ມພື້ນຫຼັງກ້ອງແກັດໃຫ້ງາມ ດ້ວຍຕົ້ນໄມ້, ກ້ອນເມກ, ຕາເວັນ, ນົກ ແລະ ອື່ນໆ





ເລີ່ມຕົ້ນຕັດເສັ້ນສາກທີ່ເປັນປ່າດ້ວຍການແຕ້ມເສັ້ນສີດໍາໃສ່ຕົ້ນໄມ້, ຫຍ້າ, ແຫຼ່ງທີຢູ່ອາໃສຂອງສັດ ໃຫ້ເປັນຮູບຮ່າງເດັ່ນສັດ



ໃຫ້ລອງຄິດວ່າຈະເຮັດແນວໃດເພື່ອເຮັດໃຫ້ສາກນີ້ຄ້າຍຄືກັບຢູ່ໃນໄດໂອລາມາ..ໂດຍເລີ່ມຈາກການຄິດ
ວ່າໃຫ້ສັດປ່າເຂົ້າມາໃນສາກນີ້

ແລ້ວຢູ່ດ້ານໜ້າ, ເຄິ່ງກາງ ແລະ ດ້ານຫຼັງຈະຢາກໃຫ້ມັນມີຫັຍງ? ເພື່ອເຮັດໃຫ້ສາກເກີດຄວາມສົມດູນ
ລະຫວ່າງຂະໜາດຂອງປ່າ ແລະ ສັດປ່າ





ຈັດທຸກຢ່າງໃຫ້ຖືກຕຳແໜ່ງໃນກອງເຈັ້ຍເພື່ອໃຫ້ເໝາະສົມກັບສາກທີ່ເປັນແຫຼ່ງອາໃສຂອງສັດປ່າ, ໂດຍໃຫ້ເສືອຢູ່ດ້ານໜ້າ







ແຕ່ງເຕີມຕົ້ນໄມ້ດ້ວຍນົກ ທີ່ອາໃສຢູ່ໃນປ່າ ຫຼື ອາດຈະແຕ້ມຮັງນົກນຳ



ມີທັງລີງ, ແກະທີ່ອາໃສຢູ່ໃນຕົ້ນໄມ້



ລວມທັງຊ້າງທີ່ເປັນສວນໜຶ່ງຂອງພື້ນທີ່ປ່າ ແລະ ເປັນບັນດາພື້ນທີ່ຂອງປ່າໄດໂອລາມາອີກດ້ວຍ



ງົວຫຼືຄວາຍປ່າເປັນໜຶ່ງໃນອາຫານຂອງເສືອທີ່ອາໃສໃນພູເຂົາ, ມັນເປັນສັດທີມີຂະໜາດໃຫຍ່, ສະນັ້ນ
ພືນຫຼັງຄວນຈັດວາງສັດທີ່ໃຫຍ່ກວ່າພວກມັນ



ໝີຕາເວັນ ແລະ ໝີກາງເວັນ ແມ່ນໃຫ້ຢາງອ້ອມງພູເຂົາ ແລະ ໃຫ້ພວກມັນຊ້ອນໂຕຢູ່ທາມກາງປ່າໄມ້ ແລະ ປ່າຫຍ້າ ຂອງປ່າ



ສວນກວາງໃຫ້ຍາງລິ້ນອ້ອມໆ ດິນແດນພູເຂົາໃນຜປ່າ ແລະ ເສືອອາໃສພວກເປັນອາຫານ. ສະນັ້ນ, ຈັດ ວາງພວກມັນຢູ່ເຄິງກາງຂອງປ່າໄດໂອລາມາ



ບັນດາຕຳແໜ່ງຂອງນົກທີ່ອາໃສຢູ່ໃນປ່າ ແລະ ສັດທີ່ຢູ່ໃນປ່າໄດໂອລາມາ ແມ່ນພະຍາຍາມຈັດວາງໃສແຕ່ລະພື້ນທີ ທີ່ພວກມັນສາມາດແນມເຫັນໄດ້ຢາງຈັດເຈັນຢູ່ໃນສາກ. ແລະ ເພື່ອໃຫ້ແນ່ໃຈວ່າພວກມັນຈະມີຢູ່ໃນສາກດັ່ງກ່າວ.. ແມ່ນໃຫ້ເຮັດແຜ່ນຮູບງ່າຍໆໃຫ້ເປັນແຕ່ລະໂຕ





ລອງສ້າງພາບໃຫ້ສັດປ່າທັງໝົດຢືນສະລັບກັນຢູ່ໃນສາກ, ສະນັ້ນ ພວກເຮົາກໍ່ສາມາດເຫັນໄດ້ວ່າສັດທັງໝົດນອນຢູ່ໃນປ່າໄດໂອລາມາແລ້ວເມືອແນມເບິງ



ລອງຍ້າຍຕຳແໜ່ງບ່ອນຢູ່ຂອງສັດປ່າແຕ່ລະຊະນິດທີ່ອາໃສຢູ່ໃນປ່າໄດໂອລາມາລອງເບິ່ງ ໂດຍເຄື່ອນຍ້າຍໄປຮອບໆ ແລະ ຄິດວ່າ ທີ່ຢູ່ອາໃສຂອງພວກມັນຢູ່ໃສ, ພວກມັນກິນຫັຍງ, ພວກມັນຊ້ອນໂຕຢູ່ໃສເພື່ອເອົາໂຕຫຼອດຕາມແຫຼ່ງທີ່ຢູ່ໃນທຳມະຊາດ?









ເສືອແມ່ນສັດໂຕເອກທີ່ອາໃສໃນປ່າໄດໂອລາມາ ສະນັ້ນ ຕ້ອງໃຫ້ໝັ້ນໃຈວ່າມັນຢູ່ເຄິ່ງກາງແລ້ວ... ແລະ ທຸກຢາງຢູ່ໃນສາກນີ້ຕ້ອງເຊື່ອມໂຍງກັບມັນ ແລະ ທີ່ຢູ່ອາໃສຂອງມັນ..... ຖ້າລາວຢາກເວົ້າກັບເຮົາ

ລາວຈະເວົ້າຫັຍງ?
ພວກເຮົາຈະຊວຍເສືອແນວໃດ ?



ແມ່ນຫັຍງຄືສິ່ງສຳຄັນທີ່ສຸດ ທີ່ເຮົາຄວນຄຳນຶ່ງຕໍ່ກັບເສືອ?

- ການທຳລາຍປ່າໄມ້ ?
- ການຄ້າຂາຍສັດປ່າຜິດກົດໝາຍ ?
- ການເຮັດຟາມເສືອ ?
- ອານຸລັກແຫຼ່ງທີ່ຢູ່ອາໃສ ?
- ອານຸລັກຕອງໂສອາຫານ ?

